ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

**ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ**
**BANQUE POUR LE COMMERCE EXTERIEUR LAO PUBLIC**

ທັນສະໄໝ ວ່ອງໄວ ໝັ້ນໃຈ
Modern Quick Reliable

ສຳນັກງານໃຫຍ່

ເລກທີ: 05 /ທຄຕລ.....2018.............

ນະຄອນຫຼວງວຽງຈັນ, ວັນທີ: 27 JUL 2018

**ມະຕິ**
**ກອງປະຊຸມສະພາບໍລິຫານ ທຄຕລ ສະໄໝສາມັນ**
**ຄັ້ງທີ 3 ປະຈຳປີ 2018, ວັນທີ 26/07/2018**

ກອງປະຊຸມສະພາບໍລິຫານຂອງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ (ທຄຕລ) ສະໄໝສາມັນ ຄັ້ງທີ 3 ປະຈຳປີ 2018 (ຕໍ່ໄປນີ້ຮຽກວ່າ "ກອງປະຊຸມ") ໄດ້ເປີດຂຶ້ນໃນເວລາ 14:30 ໂມງ ຂອງວັນທີ 26/07/2018 ທີ່ ສຳນັກງານໃຫຍ່ ທຄຕລ ໂດຍການເປັນປະທານຂອງ ທ່ານ ປອ. ບຸນເຫຼືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ, ມີສະມາຊິກສະພາບໍລິຫານ ແລະ ຜູ້ສັງເກດການເຂົ້າຮ່ວມຕາມລາຍຊື່ຊ້ອນທ້າຍ.

**ກອງປະຊຸມ ໄດ້ປຶກສາຫາລືບັນຫາຕ່າງໆພ້ອມທັງໄດ້ມີມະຕິຕົກລົງດັ່ງນີ້:**

1. ກອງປະຊຸມເຫັນດີໃຫ້ ທຄຕລ ເຮັດຈົດໝາຍວຽນເຖິງສະມາຊິກສະພາບໍລິຫານ ເພື່ອພິຈາລະນາຮັບຮອງຜົນການທົບທວນເອກະສານລາຍງານການເງິນຂອງ ທຄຕລ ປະຈຳ 6 ເດືອນຕົ້ນປີ 2018 ຫຼັງສຳເລັດການທົບທວນໂດຍຜູ້ກວດສອບອິດສະຫຼະ.
2. ຮັບຮອງການແຕ່ງຕັ້ງ 5 ຄະນະກຳມະການຂອງສະພາບໍລິຫານ, ພ້ອມກຳນົດສິດ ແລະ ພາລະບົດບາດຂອງບັນດາຄະນະກຳມະການ:
    1) ຄະນະກຳມະການກວດສອບ,
    2) ຄະນະກຳມະການຄຸ້ມຄອງຄວາມສ່ຽງ,
    3) ຄະນະກຳມະການກຳນົດຄ່າຕອບແທນ,
    4) ຄະນະກຳມະການຄັດເລືອກ,
    5) ຄະນະກຳມະການຄຸ້ມຄອງບໍລິຫານ,
3. ຮັບຮອງການແຕ່ງຕັ້ງເລຂາສະພາບໍລິຫານ ວາລະປີ 2018 – 2020.
4. ຮັບຮອງການປັບປຸງກົດລະບຽບວ່າດ້ວຍສະຫວັດດີການພະນັກງານ ທຄຕລ.
5. ເຫັນດີໃຫ້ ທຄຕລ ສ້າງຄັງແຮບຳເນັດສຳລັບພະນັກງານໃນເວລາອອກການ, ສຳລັບກົນໄກການສົມທົບເງິນເຂົ້າຄັງແຮດັ່ງກ່າວມອບໃຫ້ ທຄຕລ ສືບຕໍ່ຄົ້ນໃຫ້ສອດຄ່ອງກັບກົດລະບຽບທີ່ກ່ຽວຂ້ອງ.

ກອງປະຊຸມ ໄດ້ປິດລົງໃນເວລາ 16:30 ໂມງຂອງວັນດຽວກັນ.

**ປະທານສະພາບໍລິຫານ ທຄຕລ**

**ປອ. ບຸນເຫຼືອ ສິນໄຊວໍຣະວົງ**